# ຄວາມສຳຄັນຂອງການປູກພືດຫຼາຍຊະນິດ



ທ່ານປູກແຕ່ຜັກຊະນິດດຽວບໍ່ຢູ່ໃນສວນຂອງທ່ານ ?
ຖ້າແມ່ນລັກສະນະຄືຮູບລຸ່ມນີ້,



ມີພະຍາດລະບາດບໍ ? ມີສັດຕູພືດລະບາດບໍ ?
ຖ້າທ່ານຫາກປະເຊີນກັບບັນຫາໃດກໍ່ຕາມ.

**ຈົ່ງຈຳໄວ້ຢ່າລືມ!!! ຢາປາບສັດຕູພືດບໍ່ໄດ້ແກ້ບັນຫາ !!!**

ຖ້າດັ່ງນີ້, ຈະແກ້ໄຂແນວໃດ ?

ຈົ່ງສັງເກດເບິ່ງປ່າໄມ້. ເພື່ອສົມທຽບກັບໄຮ່ສວນຂອງທ່ານເອງ

ມັນມີຫຍັງແດ່ທີ່ແຕກຕ່າງກັນ ?




" ມີຕົ້ນໄມ້ແລະກໍາຫຍ້າເຕັມໄປໝົດ". " ມີແມງໄມ້ແລະມີສັດ"

ຢູ່ໃນປ່າໄມ້ທຸກສິ່ງທຸກຢ່າງມີຄວາມສົມດູນແລະກົມກືນກັນດີ.

ເປັນຫຍັງໃນປ່າໄມ້ສັດຕູພືດ/ພະຍາດລະບາດຈຶ່ງບໍ່ຄ່ອຍຈະເກີດມີ ?



(1) ຢູ່ທົ່ງນາເຂົ້າມີແມງໄມ້ກິນເຂົ້າ,

(3) ນົກແລະງູກິນແມງປໍແລະກົບຂຽດ,

(2) ແມງປໍແລະກົບຂຽດກິນແມງໄມ້ທີ່ກິນເຂົ້າ,

ຖ້າແມງໄມ້ຫາກສູນຫາຍໄປຈາກວົງຈອນນີ້, ແມງປໍແລະກົບຂຽດ ກໍຈະຕາຍ. ນົກແລະງູກໍ່ຈະບໍ່ມີຫຍັງຈະກິນ. ສຸດທ້າຍກໍ່ນໍາໄປສູ່ການແຜ່ພະ ຍາດລະບາດຂອງສັດຕູພືດ. ຢູ່ໃນປ່າໄມ້, ຖ້າມີການແຜ່ພະຍາດຂອງສັດຕູ ພືດຊະນິດໃດໜຶ່ງ, ພວກສັດຊະນິດອື່ນກໍ່ຈະເຂົ້າມາຢັບຢັ້ງທັນທີ.

ພວກເຮົາເອົາແບບຢູ່ໃນປ່າໄມ້ມາປະຕິບັດຢູ່ໃນພາກກະສິກໍາໄດ້ບໍ ?

# ປູກພືດຫຼາຍຊະນິດຢູ່ໃນສວນຕອນດຽວເອີ້ນວ່າ " ການປູກພືດແບບປະສົມ"



<u>ຈຸດດີຂອງການປູກພືດແບບປະສົມ</u>

(1) ຫຼຸດຜ່ອນສັດຕູພືດ/ບັນຫາພະຍາດແລະແມງໄມ້ລະບາດ.

(2) ຄວາມເລິກຂອງຮາກຕ່າງກັນຈະຊ່ວຍຍັບຢັ້ງການເສຍຂອງທາດບຳລຸງລ້ຽງຊະນິດໃດໜຶ່ງຢູ່ໃນດິນໃນເວລາດຽວກັນ, ມັນຍັງເປັນການປັບປຸງດິນໃຫ້ສົມບູນ.

(3) ຄວາມສູງແຕກຕ່າງກັນຈະເຮັດໃຫ້ພືດຮັບແສງແດດຢ່າງມີປະສິດຕິພາບ.

ແຕ່ລະ ລະດູທ່ານເຄີຍປູກພືດຊະນິດເກົ່າໃສ່ເນື້ອທີ່ດິນເດີມຫຼືບໍ່?



ຖ້າແມ່ນ, ດິນຂອງທ່ານຈະສູນເສຍທາດບຳລຸງລ້ຽງຊະນິດດຽວກັນທຸກໆລະດູ
ພາໃຫ້ເກີດສັດຕູພືດຊ້ຳເຮື້ອ/ພະຍາດແລະແມງໄມ້ລະບາດຕະຫຼອດ.
ຈິ່ງຢຸດຕິການປູກພືດຊະນິດດຽວແລະຫັນມາປູກພືດຫຼາຍຊະນິດແຕກຕ່າງ
ກັນແຕ່ລະ ລະດູ!!! ຊຶ່ງພວກເຮົາເອີ້ນວ່າ “ການປູກພືດໝູນວຽນ”.

## ເຮົາມາພ້ອມກັນຈັດກຸ່ມພືດຊະນິດຕ່າງໆ



## ທຳຄວາມເຂົ້າໃຈຈຸດພິເສດຂອງແຕ່ລະກຸ່ມພືດ ແລ້ວກໍ່ສ້າງແຜນການເພື່ອປູກພືດໝູນວຽນຢ່າງຖືກຕ້ອງ.

(1) ທັນຍາພືດ : ກິນທາດອາຫານຕໍ່ພະຍາດລະບາດຊຶມ ໃຊ້ທາດລໍ້ລ້ຽງສູງ.
(2) ພືດຖົ່ວ : ປັບປຸງດິນ(ສະໜອງໄນໂຕເຢັນ ໃຫ້ແກ່ດິນ ).
(3) ພືດໝາກ : ອ່ອນແອຕໍ່ພະຍາດລະບາດ.
(4) ພືດໃບ : ອ່ອນແອຕໍ່ພະຍາດລະບາດ.

(1) ຢ່າປູກພືດຊະນິດດຽວກັນ, ຢູ່ໃນກຸ່ມພືດດຽວກັນຢ່າງຕໍ່ເນື່ອງ
x ໝາກແຕງ-ໝາກເລັ່ນ, x ມັນດ້າງ-ເຜືອກ.



(2) ທັນຍາພືດແລະພືດຖົ່ວເຂົ້າກັນໄດ້ດີທີ່ສຸດ.
ເປັນການຖືກຕ້ອງທີ່ຈະປູກຕໍ່ເນື່ອງກັນ.





## ຕົວຢ່າງ " ການປູກພືດແບບໝູນວຽນ"




ອັນນີ້ພຽງແຕ່ເປັນຕົວຢ່າງ. ທ່ານຄວນຈະຄັດເລືອກຊະນິດພືດຕ່າງໆທີ່ເໝາະ ສົມກັບດິນຂອງທ່ານເອງໃນແຕ່ລະ ລະດູ.



ການປູກພືດຫຼາຍໆຊະນິດມີຄວາມສຳຄັນຫຼາຍ, ສົມມຸດວ່າທ່ານປູກພືດຊະນິດດຽວ ( ຜັກສະລັດ) ມັນຈະເກີດຫຍັງຂຶ້ນຖ້າຫາກທ່ານຂາຍມັນບໍ່ໄດ້ ? ຖ້າມັນເກີດພະຍາດລະບາດເດຈະເປັນແນວໃດ ?

ຖ້າທ່ານຫາກປູກພືດຫຼາຍໆຊະນິດ, ທ່ານບໍ່ຕ້ອງກັງວົນນຳແຕ່ຜັກສະລັດ. ຖ້າຫາກທ່ານຂາຍມັນບໍ່ໄດ້, ທ່ານກໍ່ຂາຍຜັກຊະນິດອື່ນໆແທນແລະກໍ່ກິນຜັກສະລັດເອງ.



ພູມປັນຍາບັນພະບູລຸດໄດ້ສັ່ງໄວ້ໃຫ້ປູກພືດຫຼາຍຫຼາກນາໆຊະນິດ ບາດເມື່ອຍາມອຶດຫິວຊິມີອັນກິນແທນເຂົ້າ. ອັນໜຶ່ງຍັງເປັນການປັບປຸງດິນໃຫ້ອຸດົມດີງາມຕື່ມ. ແຕ່ວ່າປັດຈຸບັນນີ້ຄົນມັກປູກແຕ່ພືດຊະນິດດຽວ. ຖ້າທ່ານຕ້ອງການນຳໃຊ້ດິນຂອງທ່ານຍາວນານ

ຄວນຈະຮັກສາດິນໃຫ້ອຸດົມສົມບູນສະເໝີ. ເພື່ອຮັກສາດິນໃຫ້ອຸດົມສົມບູນທ່ານຄວນເຂົ້າໃຈ ລະບົບຂອງທຳມະຊາດກ່ອນຈຶ່ງເຂົ້າພາກປະຕິບັດ.

ບາງບົດຮຽນ

# ກະສິກຳທຳມະຊາດ

## ຊຸດ ປື້ມຄູ່ມື ຫົວທີ 5

ຈັດພິມໂດຍ
ຫ້ອງການພັດທະນາຊົນນະບົດຮອບດ້ານແຂວງວຽງຈັນ
ແລະ ອົງການ ເຈວີຊີ ( JVC ) ປະເທດລາວ
ເດືອນ ສິງຫາ 1998